ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການປົກຄອງແຂວງ

ເລກທີ 513/ຫກ.ອປ

ອັດຕະປື, ວັນທີ 12 ກໍລະກົດ 2016

# ແຈ້ງການ

ເຖິງ: - ຫົວໜ້າພະແນກການ, ອົງການທຽບເທົ່າ ອ້ອມຂ້າງແຂວງ

- ຫົວໜ້າກອງບັນຊາການ ປກຊ-ປກສ ແຂວງ
- ເຈົ້າເມືອງ 5 ເມືອງ

ເລື່ອງ: ການສະເໜີຂໍງົບປະມານນອກແຜນນຳແຂວງເພື່ອຈັດຕັ້ງປະຕິບັດໂຄງການ

- ອີງຕາມ ຂໍ້ກຳນົດຂອງຄະນະປະຈຳພັກແຂວງ ສະບັບເລກທີ 85/ຄປພຂ, ລົງວັນທີ 21/1/2013 ໝວດທີ III ມາດຕາ 5 ວ່າດ້ວຍໜ້າທີ່ ແລະ ຂອບເຂດສິດຂອງຫ້ອງວ່າການປົກຄອງແຂວງ.
- ອີງຕາມ ຄວາມເຫັນດີເປັນເອກະພາບໃນກອງປະຊຸມຄະນະປະຈຳພັກແຂວງ ຄັ້ງວັນທີ 4/7/2016

ຫ້ອງວ່າການປົກຄອງແຂວງ ຂໍຖືເປັນກຽດແຈ້ງການຕາມຕິກລົງຂອງຄະນະປະຈຳພັກແຂວງ ມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາເຫັນວ່າມີຫລາຍພາກສ່ວນສະເໜີຂໍງົບປະມານນຳແຂວງ ເພື່ອຈັດຕັ້ງປະຕິບັດບັນດາໂຄງການທີ່ມີຄວາມຈຳເປັນຕ່າງໆ ( ໂຄງການນອກແຜນ ) ເຊິ່ງບາງໂຄງການກໍ່ໄດ້ຮັບການອະນຸມັດແກ້ໄຂໃຫ້ຈັດຕັ້ງປະຕິບັດ ແລະ ບາງໂຄງການກໍ່ຖືກສັ່ງໂຈະ ເນື່ອງຈາກແຂວງກໍ່ມີຄວາມຈຳເປັນທາງດ້ານງົບປະມານທີ່ບໍ່ອາດຈະສະໜອງໃຫ້ຕາມຄວາມຮຽກຮ້ອງຕ້ອງການທີ່ສະເໜີມາ; ສະນັ້ນ, ເພື່ອຄວາມເປັນເອກະພາບປະຕິບັດນັບແຕ່ນີ້ເປັນຕົ້ນໄປ ຂໍໃຫ້ແຕ່ລະພາກສ່ວນ, ຂະແໜງການ, ກົມກອງ ແລະ ເມືອງ ຫັນໄປສູ່ລະບຽບຫລັກການວ່າດ້ວຍງົບປະມານ ( ຖ້າເປັນໂຄງການນອກແຜນ ບໍ່ໃຫ້ສະເໜີໃຫ້ແຂວງພິຈາລະນາອີກ ), ໃຫ້ປະຕິບັດຕາມແຜນງົບປະມານອະນຸມັດໃນແຕ່ລະສົກປີຢ່າງເຂັ້ມງວດ, ຍົກເວັ້ນບາງໂຄງການທີ່ເປັນບຸລິມະສິດ ແລະ ການຊີ້ນຳຂອງແຂວງ ຈະພິຈາລະນາເປັນກໍລະນີພິເສດ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ./

ສຳເນົາສົ່ງ:

| | |
|---|---|
| - ຄະນະປະຈຳພັກແຂວງ ເພື່ອຊາບ | 9 ສະບັບ |
| - ຄະນະຫ້ອງວ່າການປົກຄອງແຂວງ | 5 ສະບັບ |
| - ຂະແໜງສັງລວມພັກ-ລັງລວມລັດ | 2 ສະບັບ |
| - ເກັບມ້ຽນ | 1 ສະບັບ |

ຫົວໜ້າຫ້ອງວ່າການປົກຄອງແຂວງ

ຫ້ອງວ່າການ ປົກຄອງ



ກະນູໄຊ ບັນຊາລິດ